ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມສ່ວຍສາອາກອນ

0169
ເລກທີ /ກສອ

ນະຄອນຫລວງວຽງຈັນ, ວັນທີ 11 JAN 2018

ເຖິງ : ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກຂັ້ນ, ພະນັກງານ, ທະຫານ, ຕໍາຫລວດ, ປະຊາຊົນທຸກຄົນ, ຊາວຕ່າງດ້າວ, ຊາວຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດໍາລົງຊີວິດ ຢູ່ດິນແດນ ສປປ ລາວ.

ເລື່ອງ: ການຈັດຕັ້ງປະຕິບັດອາກອນຊົມໃຊ້ຂອງບາງປະເພດ ສິນຄ້າ ແລະການບໍລິການ ຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015.

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ສະບັບເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ໜັງສືແຈ້ງຂອງທ່ານຮອງນາຍົກລັດຖະມົນຕີ ລັດຖະມົນຕີກະຊວງການເງິນ ສະບັບເລກທີ 0060/ກງ, ລົງວັນທີ 11 ມັງກອນ 2018

ເພື່ອປະຕິບັດຕາມມາດຕາ 20 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ( ສະບັບປັບປຸງ ) ໃຫ້ຖືກຕ້ອງ ແລະເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ກົມສ່ວຍສາອາກອນ ແຈ້ງເພີ່ມເຕີມກ່ຽວກັບອັດຕາອາກອນຊົມໃຊ້ຂອງບາງປະເພດສິນຄ້າ ແລະ ບໍລິການ ດັ່ງນີ້ :

1. ອັດຕາອາກອນຊົມໃຊ້ສິນຄ້າທົ່ວໄປ

| ລ/ດ | ປະເພດສິນຄ້າທົ່ວໄປ ທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາທຽບຖານເປັນສ່ວນຮ້ອຍ(%) | ໝາຍເຫດ |
|---|---|---|---|
| 1 | ນໍ້າມັນເຊື້ອໄຟ:<br>- ນໍ້າມັນແອັດຊັງພິເສດ<br>- ນໍ້າມັນແອັດຊັງທໍາມະດາ<br>- ນໍ້າມັນກາຊວນ<br>- ນໍ້າມັນກາດຍົນ<br>- ນໍ້າມັນເຄື່ອງ, ນໍ້າມັນໄຮໂດລິກ, ນໍ້າມັນໜຽວ, ນໍ້າມັນຫ້າມລໍ້ | 1/1/2018 ເປັນຕົ້ນໄປ<br>39%<br>34%<br>24%<br>14%<br>9% | ເນື່ອງຈາກວ່າສິນຄ້າປະເພດນໍ້າມັນເຊື້ອໄຟ ເປັນສິນຄ້າທີ່ກໍານົດລາຄາຕາມໂຄງລ່າງ ຈຶ່ງໃຫ້ຈັດຕັ້ງປະຕິບັດພາຍຫລັງໄດ້ປັບໂຄງລ່າງລາຄາສໍາເລັດແລ້ວ. |
| 2 | ເຫຼົ້າ ຫລື ເຄື່ອງດື່ມທີ່ມີທາດເຫຼົ້າ :<br>- ເຫຼົ້າ ຫລື ເຄື່ອງດື່ມທີ່ມີທາດເຫຼົ້າ ແຕ່ ຊາວ ອົງສາຂຶ້ນໄປ<br>- ເຫຼົ້າ ຫລື ເຄື່ອງດື່ມທີ່ມີທາດເຫຼົ້າຕໍ່າກວ່າ ຊາວ ອົງສາ | 2018-2019<br>50%<br>45% | |
| 3 | ປະເພດຢາສູບ:<br>- ຢາຊີກາ<br>- ຢາສູບເປັນກອກ ຫຼື ເປັນຊອງ<br>- ຢາເສັ້ນສໍາເລັດຮູບ<br>- ຢາສູບປະເພດອື່ນໆ | 2018-2019<br>45%<br>45%<br>25%<br>45% | |

2. ອັດຕາອາກອນຊົມໃຊ້ສໍາລັບການບໍລິການ

| ລ/ດ | ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາ |
|---|---|---|
| | | 2018-2019 |
| 1 | ການບັນເທີງ: ໂຮງເຕັ້ນລໍາ, ດິດສະໂກເທັກ, ຄາຣາໂອເກະ | 20% |

ສ່ວນບັນດາປະເພດສິນຄ້າ ແລະການບໍລິການ ທີ່ບໍ່ໄດ້ກໍານົດຂ້າງເທິງນີ້ ໃຫ້ປະຕິບັດອັດຕາທີ່ໄດ້ປະກາດໃຊ້ຜ່ານມາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 20 ຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ( ສະບັບປັບປຸງ ).

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະຈັດຕັ້ງປະຕິບັດ.

ຫົວໜ້າກົມສ່ວຍສາອາກອນ

ຈູທະນຸເພັດ ໄຊສົມບັດ